# ຄຳນຳ

ເພື່ອໃຫ້ສອດຄ່ອງກັບການປະຕິຮູບການສຶກສາແຫ່ງຊາດ ແລະ ແຜນການພັດທະນາຄຸນນະພາບຂອງກົມສ້າງຄູ ດັ່ງນັ້ນ, ວິທະຍໄລຄູສະຫວັນນະເຂດໄດ້ຖືເອົາການປະກັນຄຸນນະພາບການສຶກສາຂອງສະຖາບັນ ເປັນວຽກງານທີ່ມີ ບົດບາດສຳຄັນໃນການກະຕຸກຊຸກຍູ້ວຽກງານຕ່າງໆຂອງສະຖາບັນໃຫ້ມີຄວາມເຂັ້ມແຂງ ແລະ ພັດທະນາຢ່າງຕໍ່ເນື່ອງ ເພື່ອຕອບສະໜອງກັບວຽກງານດັ່ງກ່າວ ວິທະຍາໄລຄູຈຶ່ງໄດ້ແຕ່ງຕັ້ງຄະນະຮັບຜິດຊອບການປະເມີນຄຸນນະພາບພາຍໃນສະຖາບັນຂຶ້ນ ເພື່ອກວດກາ, ເກັບກຳ, ລວບລວມຂໍ້ມູນຈາກໜ່ວຍງານ, ຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອສະໜອງໃຫ້ແກ່ການປະເມີນຄຸນນະພາບດັ່ງກ່າວ.

ສຳລັບການປະເມີນການສ້າງເປັນສູນກາງແຫ່ງການພັດທະນາໃນຄັ້ງນີ້ ວິທະຍາໄລຄູສະຫວັນນະເຂດ ໄດ້ມີການປະຕິບັດ ແລະ ເອົາໃຈໃສ່ຕໍ່ກັບວຽກການປະເມີນຄຸນນະພາບພາຍໃນເປັນຢ່າງດີ ເຊິ່ງໄດ້ຮັບການແນະນຳຈາກພະແນກປະເມີນຜົນຂອງກົມສ້າງຄູທີ່ໄດ້ຕິດຕາມ, ກວດກາ, ຊຸກຍູ້ຂະບວນການປະເມີນຜົນພາຍໃນຢ່າງຕໍ່ເນື່ອງ, ພ້ອມນັ້ນຍັງໄດ້ຮັບການຊີ້ນຳເປັນຢ່າງດີຈາກຄະນະອຳນວຍການ ແລະ ການຮ່ວມມືຈາກຄະນະຫ້ອງການ, ຄະນະໜ່ວຍງານ ແລະ ອົງການຈັດຕັ້ງມະຫາຊົນ ພາຍໃນວິທະຍາໄລຄູສະຫວັນນະເຂດ.

ເຖິງແມ່ນວ່າບົດສັງລວມຫຍໍ້ການປະເມີນການສ້າງເປັນສູນກາງແຫ່ງການພັດທະນາສະບັບນີ້ ຈະເປັນບົດທີ່ສຳເລັດແລ້ວກໍຕາມ ແຕ່ກໍຍັງບໍ່ສາມາດປາສະຈາກໄດ້ເຖິງຄວາມຂາດຕົກບົກຜ່ອງທາງດ້ານເນື້ອໃນ ແລະ ການຈັດພິມ ສະນັ້ນ, ຈຶ່ງຮຽກຮ້ອງມາຍັງທ່ານຜູ້ທີ່ໄດ້ສຶກສາ ແລະ ອ່ານບົດສັງລວມການກວດກາຄຸນນະພາບໃນສະບັບນີ້ຊ່ວຍມີຄຳເຫັນເພື່ອປັບປຸງເຮັດໃຫ້ເນື້ອໃນການປະເມີນຜົນຄັ້ງນີ້ສົມບູນ ແລະ ສອດຄ່ອງກັບຄວາມເປັນຈິງຂຶ້ນກວ່າເກົ່າ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນ ທີ່ໄດ້ເຂົ້າຮ່ວມປະເມີນຜົນຄຸນນະພາບພາຍໃນຂອງວິທະຍາໄລຄູສະຫວັນນະເຂດ ໂດຍສະເພາະແມ່ນທຸກໆຄຳເຫັນ ແລະ ຂໍ້ສະເໜີແນະຕ່າງໆທີ່ເປັນປະໂຫຍດໃນການປັບປຸງບົດສັງລວມການປະເມີນຄຸນນະພາບພາຍໃນວິທະຍາໄລຄູຄັ້ງນີ້ ຈົນເຮັດໃຫ້ບົດດັ່ງກ່າວສາເລັດຜົນລົງໂດຍດີ.

ຄະນະຮັບຜິດຊອບການປະເມີນຄຸນນະພາບພາຍໃນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມສ້າງຄູ
ວິທະຍາໄລຄູສະຫວັນນະເຂດ

ເລກທີ 474 /ວຄສ/2016
ລົງວັນທີ 27 JUL 2016

## ບົດສັງລວມຫຍໍ້
## ການສ້າງສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດ

- ຄະນະປະເມີນຜົນພາຍໃນ ວິທະຍາໄລຄູ ສະຫວັນນະເຂດ ປະກອບມີ:

| | | |
|---|---|---|
| 1. | ທ່ານ ລັດສະໝີ ພະໄຊສີ | ຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ |
| 2. | ທ່ານ ພົມມະສອນ ອິ່ລະບຸດ | ຮອງຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ |
| 3. | ທ່ານ ນາງ ໃສຊົມຊື່ນ ໂພທິສານ | ຮອງຜູ້ອຳນວຍການວິທະຍາໄລຄູສະຫວັນນະເຂດ, ສະຫະພັນແມ່ຍິງ |
| 4. | ທ່ານ ບໍລົມ ເກດຕະວົງ | ຫົວໜ້າຫ້ອງການວັດຜົນ-ປະເມີນຜົນ |
| 5. | ທ່ານ ພົມມາ ໄຊຍະວົງ | ຫົວໜ້າຫ້ອງການບໍລິຫານ |
| 6. | ທ່ານ ສອນແກ້ວ ອຸ່ນປະເສີດ | ຫົວໜ້າຫ້ອງການຈັດຕັ້ງ-ພະນັກງານ |
| 7. | ທ່ານ ອຳພອນ ຂາວເພຍສຸພົມ | ຫົວໜ້າຫ້ອງການສົ່ງເສີມວິຊາການ |
| 8. | ທ່ານ ນາງ ແກ້ວລຳຂວັນ ພັກດີວິຈິດ | ຫົວໜ້າຫ້ອງການພັດທະນາຄູ |
| 9. | ທ່ານ ໄພໄຊ ພິລາວົງ | ຫົວໜ້າຫ້ອງການກິດຈະການນັກສຶກສາ, ສະຫະພັນກຳມະບານ |
| 10. | ທ່ານ ສົມພົງ ສີຈັນທອງທິບ | ຫົວໜ້າຫ້ອງການວິທະຍາສາດທຳມະຊາດ |
| 11. | ທ່ານ ນາງ ຈັນສຸດາ ຈັນທິວົງ | ຫົວໜ້າຫ້ອງການວິທະຍາສາດສັງຄົມ |
| 12. | ທ່ານ ເພາດ ມິນທາທິລາດ | ຫົວໜ້າຫ້ອງການອະນຸບານ-ປະຖົມ |
| 13. | ທ່ານ ສຸດສາຄອນ ໄຊສິດທິເດດ | ຮອງຫົວໜ້າຫ້ອງການວັດຜົນ-ປະເມີນຜົນ |
| 14. | ທ່ານ ຄຳໄຫວ ຫຼວງສະລາດ | ຮອງຫົວໜ້າຫ້ອງການບໍລິຫານ |
| 15. | ທ່ານ ບຸນເລີດ ຈັນດີບຸພາບ | ຮອງຫົວໜ້າຫ້ອງການວິທະຍາສາດທຳມະຊາດ |
| 16. | ທ່ານ ບົວໃສ ລາດຊະກຸນໄທ | ຮອງຫົວໜ້າຫ້ອງການຈັດຕັ້ງ-ພະນັກງານ |
| 17. | ທ່ານ ວົງເພັດ ວົງສະດາລັດ | ຮອງຫົວໜ້າຫ້ອງການກິດຈະການນັກສຶກສາ |
| 18. | ທ່ານ ກະຕິກາ ຣາຊະບຸດຣ໌ | ຮອງຫົວໜ້າຫ້ອງການພັດທະນາຄູ |
| 19. | ທ່ານ ໄພລັດ ສີທອງ | ຮອງຫົວໜ້າຫ້ອງການສົ່ງເສີມວິຊາການ |
| 20. | ທ່ານ ສີຫານຸລາດ ທານະຂັນຕິ | ຮອງຫົວໜ້າຫ້ອງການສົ່ງເສີມວິຊາການ |
| 21. | ທ່ານ ນາງ ສຸກັນ ໄຊຍະເພັດ | ຮອງຫົວໜ້າຫ້ອງການວິທະຍາສາດສັງຄົມ |
| 22. | ທ່ານ ຄຳປະສົງ ຄູນມີໄຊ | ຮອງຫົວໜ້າຫ້ອງການພາສາຕ່າງປະເທດ |
| 23. | ທ່ານ ນາງ ບຸນ ແກ້ວແສນໄຊ | ຮອງຫົວໜ້າຫ້ອງການອະນຸບານ-ປະຖົມ |
| 24. | ທ່ານ ນາງ ແກ້ວວົງວອນ ຈັນທະລັງສີ | ຕາງໜ້າອົງການຈັດຕັ້ງຊາວໜຸ່ມ |

# ບົດສັງລວມຫຍໍ້ຜົນການປະເມີນ
# ການສ້າງສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດ
# (ໄລຍະເລີ່ມຕົ້ນ)

ເພື່ອປະຕິບັດຕາມແຜນພັດທະນາຄຸນນະພາບການສຶກສາຂອງກົມສ້າງຄູ ກໍຄື ກະຊວງສຶກສາທິການ ແລະ ກິລາວາງອອກໃຫ້ປາກົດຜົນເປັນຈິງເທື່ອລະກ້າວ, ໄປຄຽງຄູ່ກັບການປະຕິບັດແຜນພັດທະນາປະຈຳປີແລ້ວ ວິທະຍາໄລຄູສະຫວັນນະເຂດ ຍັງໄດ້ຖືເອົາວຽກງານການປະເມີນຄຸນນະພາບພາຍໃນຂອງສະຖາບັນພ້ອມກັບວຽກ ສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດເປັນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນ ເນື່ອງຈາກ ວ່າວຽກງານດັ່ງກ່າວເປັນການກວດກາຄືນການປະຕິບັດແຜນພັດທະນາໃນແຕ່ລະປີ ທັງຍັງເປັນການກະຕຸກຊຸກຍູ້ ວຽກງານຕ່າງໆ ໂດຍສະເພາະວຽກວິຊາການໃຫ້ມີການພັດທະນາຢ່າງຕໍ່ເນື່ອງ. ດັ່ງນັ້ນ, ວິທະຍາໄລຄູສະຫວັນນະເຂດ ກໍໄດ້ເອົາໃຈໃສ່ຕໍ່ກັບວຽກງານນີ້ຢ່າງຈິງຈັງເຊິ່ງໄດ້ມອບໝາຍໃຫ້ຫ້ອງການວັດຜົນ-ປະເມີນຜົນເປັນຜູ້ຮັບຜິດຊອບດຳເນີນການປະເມີນຜົນຄຸນນະພາບພາຍໃນ ແລະ ສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດ ໂດຍສົມທົບກັບທຸກໆພາກສ່ວນທີ່ກ່ຽວຂ້ອງພາຍໃນສະຖາບັນພາຍໃຕ້ການຊີ້ນຳຂອງຄະນະພັກ, ຄະນະອຳນວຍການ ເຊິ່ງໄດ້ປະເມີນໃນສອງລາຍວິຊາຕາມແຈ້ງການຂອງກົມສ້າງຄູ ສະບັບເລກທີ 699 ລົງວັນທີ 29 ກັນຍາ 2016 ຕົກລົງໃຫ້ວິທະຍາໄລຄູສະຫວັນນະເຂດ ສ້າງຄວາມພ້ອມໃຫ້ແກ່ການສ້າງສູນແຫ່ງການພັດທະນາໃນສອງສາຂາວິຊາຄື: ວິຊາຄູຄະນິດສາດ ແລະ ວິຊາຄູເຄມີສາດ.

ສຳລັບການເມີນວຽກງານການສ້າງສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດ ໃນຄັ້ງນີ້ ການຈັດຕັ້ງປະຕິບັດແມ່ນໄດ້ດຳເນີນການ ຕາມການແນະນຳຂອງກົມສ້າງຄູ, ຄະນະອຳນວຍການ ແລະ ເອກະສານຄູ່ມືການປະເມີນຄຸນນະພາບພາຍໃນ ແລະ ຄູ່ມືການສ້າງສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດ ດັ່ງນັ້ນ, ຄະນະຫ້ອງການວັດປະເມີນຜົນຈຶ່ງໄດ້ວາງແຜນໃນການດຳເນີນງານ ມີຂະບວນການດຳເນີນຕາມຂັ້ນຕອນດັ່ງນີ້: ແຕ່ງຕັ້ງຄະນະປະເມີນຜົນພາຍໃນວິທະຍາໄລຄູ ປະກອບດ້ວຍຄະນະຊີ້ນຳລວມ, ຄະນະຫ້ອງການ 10 ຫ້ອງການ, ຜູ້ຮັບຜິດຊອບພາຍໃນຫ້ອງການວັດປະເມີນຜົນ ແລະ ອົງການຈັດຕັ້ງມະຫາຊົນ ຈາກນັ້ນເຜີຍແຜ່ເອກະສານຄູ່ມື ລວມທັງແຜນການດຳເນີນ ຂອງວຽກງານການປະເມີນຜົນພາຍໃນ 10 ມາດຕະຖານ, 50 ຕົວຊີ້ວັດ ແລະ ລາຍການຮູບຣິກສຳລັບການປະເມີນການສ້າງເປັນສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດ 15 ຕົວຊີ້ວັດ (ໄລຍະ 2: ໄລຍະເລີ່ມຕົ້ນ) ໃຫ້ແຕ່ລະພາກສ່ວນ ເພື່ອທຳຄວາມເຂົ້າໃຈກ່ຽວກັບບັນດາເນື້ອໃນຂອງມາດຕະຖານ ແລະ ຕົວຊີ້ວັດຕ່າງໆ, ຈາກນັ້ນໄດ້ຈັດກອງປະຊຸມເພື່ອດຳເນີນການປະເມີນ ແລະ ເປັນເອກະພາບກັນຕີລາຄາໃຫ້ຄະແນນຕາມຄວາມເໝາະສົມ ແລະ ຕາມຄວາມເປັນຈິງຂອງສະຖາບັນ. ຈາກນັ້ນຄະນະຮັບຜິດຊອບຫ້ອງການວັດຜົນ-ປະເມີນຜົນເປັນຜູ້ສັງລວມ ແລ້ວຂຽນເປັນບົດສະຫຼູບລາຍງານພາຍໃນສະຖາບັນ ແລະ ສົ່ງລາຍງານໃຫ້ຂັ້ນເທິງ (ກົມສ້າງຄູ, ກະຊວງສຶກສາທິການ ແລະ ກິລາ).

ໃນການປະເມີນການສ້າງເປັນສູນກາງແຫ່ງການພັດທະນາ ແລະ ສູນກາງແຫ່ງຄວາມເປັນເລີດຕາມ 15 ຕົວຊີ້ວັດຂອງໄລຍະເລີ່ມຕົ້ນໃນສອງສາຂາວິຊາຄື: ວິຊາຄູຄະນິດສາດ ແລະ ວິຊາຄູເຄມີສາດ ສາມາດສະຫຼຸບເປັນຄະແນນໄດ້ດັ່ງນີ້:

## I. ດ້ານຄຸນນະພາບການຮຽນ-ການສອນ:

### 1. ການບໍລິຫານຄຸ້ມຄອງ

ຜູ້ທີ່ເປັນຫົວໜ້າ ຫຼື ຜູ້ບໍລິຫານ ທີ່ຮັບຜິດຊອບຫຼັກສູດກໍ່ສ້າງຄູຕ້ອງມີວຸດທິການສຶກສາໃນລະດັບປະລິນຍາໂທດ້ານການສຶກສາ/ການບໍລິຫານຄຸ້ມຄອງການສຶກສາ/ຫຼືວິຊາສະເພາະໃດໜຶ່ງ ເຫັນວ່າພວກເຮົາມີຄວາມພ້ອມຕາມມາດຖານດັ່ງກ່າວ **ໄດ້ 2 ຄະແນນ.**

### 2. ພາກວິຊາ/ຫ້ອງການສາຍ

- ຕ້ອງມີພະນັກງານວິຊາການປະຈໍາການເຕັມເວລາ ຢ່າງໜ້ອຍ ສອງ (2) ຄົນ ຊຶ່ງທຸກຄົນຕ້ອງມີວຸດທິການສຶກສາໃນລະດັບປະລິນຍາໂທດ້ານການສຶກສາ/ການບໍລິຫານຄຸ້ມຄອງການສຶກສາ/ຫຼືວິຊາສະເພາະໃດໜຶ່ງ **ໄດ້ 2 ຄະແນນ.**

- ຢ່າງໜ້ອຍ 50% ຂອງຈໍານວນຄູສອນທັງໝົດ ໄດ້ສອນຕາມສາຍວິຊາສະເພາະທີ່ຮຽນຈົບມາ **ໄດ້ 2 ຄະແນນ.**

- ຄູສອນທຸກຄົນທີ່ສອນໃນລະດັບອະນຸປະລິນຍາມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາຕີ ແລະ ຄູສອນທຸກຄົນທີ່ສອນໃນລະດັບປະລິນຍາຕີ ມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາໂທ. ມາດຖານນີ້ມີຄະແນນເຕັມເທົ່າ 1 ຄະແນນ, ແຕ່ພວກເຮົາໃຫ້ຄະແນນຕົນເອງ **0,5 ຄະແນນ** ເນື່ອງຈາກວ່າຍັງຂາດມາດຖານຄູສອນທຸກຄົນທີ່ສອນໃນລະດັບປະລິນຍາຕີ ມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາໂທ.

- ມີລະບົບການປະເມີນຜົນການຮຽນ-ການສອນ ເປັນແຕ່ລະໄລຍະ ໂດຍຜູ້ບໍລິຫານ, ເພື່ອນຮ່ວມງານ ແລະ ນັກສຶກສາ ແລະ ມີການດໍາເນີນການປະເມີນແນໃສ່ປັບປຸງການຮຽນ/ການສອນໃຫ້ດີຂຶ້ນ ແຕ່ບໍ່ມີປະສິດທິພາບປານໃດ. **ໄດ້ 1 ຄະແນນ.**

- ໜ້ອຍກວ່າ 50% ຂອງຈໍານວນພະນັກງານປະຈໍາການເຕັມເວລາ ໄດ້ເຂົ້າຮ່ວມກອງປະຊຸມລວມໃນລະດັບຊາດ ແລະ ໃນລະດັບສາກົນ (ເຊັ່ນໂມດູນຂອງ SEAMEO) ໃນນາມຜູ້ສະເໜີເອກະສານໃນກອງປະຊຸມດັ່ງກ່າວ ໃນໄລຍະ ຫ້າ (5) ປີ ຜ່ານມາ. ຄະແນນເຕັມ 1,5 ແຕ່ພວກເຮົາໃຫ້ຄະແນນຕົນເອງ **1 ຄະແນນ** ເນື່ອງຈາກວ່າໄດ້ເຂົ້າຮ່ວມ ແຕ່ກໍຍັງມີຈໍານວນໜ້ອຍຄົນຢູ່.

- ໜ້ອຍກວ່າ 30% ຂອງຈໍານວນ ພະນັກງານປະຈໍາການເຕັມເວລາໄດ້ຮັບການຍ້ອງຍໍ, ທຶນການສຶກສາ ແລະ ຮູບການນະໂຍບາຍອື່ນໆ ດ້ານການຮັບຮອງວິທະຍາຖານະຈາກອົງການຈັດຕັ້ງທີ່ເປັນມືອາຊີບ ແລະ ມີຊື່ສຽງໃນລະດັບຊາດ ແລະ ໃນລະດັບສາກົນ ໃນໄລຍະຫ້າ(5) ປີທີ່ຜ່ານມາ. **ໄດ້ 0,5 ຄະແນນ.** ເນື່ອງຈາກວ່າພຽງແຕ່ໄດ້ເຂົ້າຮ່ວມສະເໜີເທົ່ານັ້ນ ຍັງບໍ່ທັນໄດ້ຮັບນະໂຍບາຍດ້ານໃດເລີຍ.

- ຢ່າງໜ້ອຍ 5% ຂອງຈໍານວນພະນັກງານປະຈໍາການເຕັມເວລາ ຕ້ອງເປັນພະນັກງານຊີ້ນໍາຂອງອົງການວິຊາການໃນລະດັບຊາດ ດ້ານການສຶກສາ/ສາຍວິຊາ ຫຼື ໃນວິຊາສະເພາະ ທີ່ມີການພົວພັນກັບວິຊາສອນ. **ໄດ້ 0 ຄະແນນ** ຍ້ອນວ່າຍັງບໍ່ທັນມີໃຜເທື່ອ.

***ສັງລວມແລ້ວ ມາດຕະຖານດ້ານພາກວິຊາ/ຫ້ອງການສາຍ ໄດ້ຄະແນນລວມເທົ່າ: 7.***

### 3. ຫຼັກສູດ

- ມີຫຼັກສູດສ້າງຄູໃນລະດັບອະນຸປະລິນຍາ ລວມທັງຫຼັກສູດສ້າງຄູມັດທະຍົມສຶກສາ ໃນຫ້າ (5) ສາຍວິຊາ. **ໄດ້ຄະແນນເຕັມ 3** ຍ້ອນວ່າວິທະຍາໄລຄູພວກເຮົາປັດຈຸບັນສ້າງຄູມັດທະຍົມສຶກສາຫຼາຍກວ່າ 5 ສາຍ.

- ມີຫຼັກສູດສ້າງຄູໃນລະດັບປະລິນຍາຕີ ໃນສາມປະເພດ (3) ປະເພດຄື: ສ້າງຄູສອນຊັ້ນ ອະນຸບານ, ຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ (ມີ 5 ໃນຈໍານວນ 15 ສາຍວິຊາຂອງຫຼັກສູດສ້າງຄູມັດທະຍົມສຶກສາ). ຄະແນນເຕັມ 3 ແຕ່ພວກເຮົາໃຫ້ **2 ຄະແນນ** ຍ້ອນຍັງຂາດການສ້າງຄູສອນຊັ້ນອະນຸບານໃນລະດັບປະລິນຍາຕີ.

*ສັງລວມແລ້ວ ມາດຕະຖານດ້ານຫຼັກສູດ ໄດ້ຄະແນນລວມເທົ່າ: 5.*

**4. ແຫຼ່ງການຮຽນຮູ້ *(ຄວາມສາມາດດ້ານເຕັກໂນໂລຊີການສື່ສານ, ສິ່ງອຳນວຍຄວາມສະດວກ, ແລະ ເຄື່ອງອຸປະກອນ)***

ນັກສຶກສາ ແລະ ຄູອາຈານ ສາມາດເຂົ້າເຖິງຫ້ອງ/ ສິ່ງອຳນວຍຄວາມສະດວກດ້ານຄອມພິວເຕີ ຢ່າງເຕັມສ່ວນ ໂດຍນຳໃຊ້ໂປຣແກຣມທີ່ມີໃບອະນຸຍາດ ຫຼື ໂປຣແກຣມເປີດກວ້າງ. ມີເນື້ອໃນບົດຮຽນເອເລັກໂທຣນິກຢ່າງໜ້ອຍ 500 ຫົວ/ຫົວເລື່ອງ ສຳລັບ 5 ສາຍວິຊາທີ່ສອນ. ເນື້ອໃນທັງໝົດຖືກເກັບມ້ຽນໃນເວບໄຊບົດຮຽນເອເລັກໂທຣນິກ. ມີຄະແນນເຕັມເທົ່າ 2 ແຕ່ພວກເຮົາໃຫ້ **1 ຄະແນນ** ເນື່ອງຈາກຍັງບົດຮຽນເອເລັກໂທຣນິກ.

**5. ຫ້ອງສະໝຸດ *(ສຳລັບຫຼັກສູດສ້າງຄູສອນຊັ້ນມັດທະຍົມສຶກສາ, ຂໍແນະນຳໃຫ້ມີເອກະສານທີ່ບໍ່ເກົ່າຫຼາຍ ຄືໃຫ້ມີເອກະສານພິມຫຼັງປີ 2000)***

ມີການປັບປຸງຫ້ອງສະໝຸດໃຫ້ທັນສະໄໝ (ເອກະສານສຳພັດ/ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ເພື່ອເປັນບ່ອນອີງຈາກສາກົນ ແລະ ຈາກທ້ອງຖິ່ນ. ຫ້ອງສະໝຸດມີປື້ມຢ່າງໜ້ອຍ 500 ຫົວ/ຫົວເລື່ອງ (ເອກະສານສຳພັດ/ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ສຳລັບ 5 ສາຍວິຊາທີ່ສອນ. **ໄດ້ເຕັມ 1 ຄະແນນ.**

**6. ລະບົບການຊ່ວຍເຫຼືອນັກສຶກສາ**

ວິທະຍາໄລຄູສະຫວັນນະເຂດມີແຜນປະຕິບັດງານລະອຽດໃນການໃຫ້ການຊ່ວຍເຫຼືອນັກສຶກສາເຊັ່ນ: ທາງດ້ານວິຊາການຄູທີ່ປຶກສາຂຽນບົດຈົບຊັ້ນ, ບົດວິໄຈ, ບຳລຸງນັກຮຽນອ່ອນ ແລະ ຄູທີ່ປຶກສາຫ້ອງຊ່ວຍເຫຼືອພ້ອມນຳພາທາງດ້ານຕ່າງໆ, ມີລະບົບຖານຂໍ້ມູນທີ່ນັກຮຽນສາມາດຕິດຕາມຜົນການຮຽນຂອງຕົນເອງໄດ້ ແລະ ມີຫ້ອງໃຫ້ຄຳປຶກສາໃຫ້ແກ່ນັກສຶກສາເຂົ້າເຖິງທາງດ້ານສຸຂະພາບ **ໄດ້ເຕັມ 1 ຄະແນນ.**

**7. ປະຫວັດຂອງຜູ້ຮຽນຈົບ**

ວິທະຍາໄລຄູສະຫວັນນະເຂດມີຂໍ້ມູນຄົນຮຽນຈົບຂັ້ນປະລິນຍາຕີໃນໄລຍະ 5 ປີທີ່ຜ່ານມາ. **2 ຄະແນນ**

## II. ການຄົ້ນຄວ້າວິໄຈ ແລະ ການພິມເຜີຍແຜ່ (30%)

ໜ້ອຍກວ່າ 50% ຂອງຈຳນວນ ພະນັກງານປະຈຳການເຕັມເວລາ/ຄູອາຈານປະຈຳສາຍວິຊາໄດ້ເຮັດການຄົ້ນຄວ້າວິໄຈ (ຄົ້ນຄວ້າພື້ນຖານ ຫຼື ຄົ້ນຄວ້ານຳໃຊ້) ໃນໄລຍະ 5 ປີທີ່ຜ່ານມາ. **ໄດ້ຄະແນນເຕັມເທົ່າ 10** ເນື່ອງຈາກວ່າທາງສະຖາບັນ ມີນະໂຍບາຍໃຫ້ຄູອາຈານໄດ້ຄົ້ນຄວ້າວິທະຍາສາດ ແລະ ເຜີຍແຜ່ຜົນງານການຄົ້ນຄ້ວາໃຫ້ສັງຄົມໄດ້ຮັບຮູ້ ພ້ອມທັງໃຫ້ບໍລິການດ້ານວິຊາການແກ່ພາຍໃນ ແລະ ສະຖາບັນອ້ອມຂ້າງຕ່າງໆ.

## III. ການຜັນຂະຫຍາຍ ແລະ ການເຊື່ອມໂຍງ

- ໜ່ວຍງານຕ້ອງໄດ້ຈັດກອງປະຊຸມການສຳມະນາ, ກອງປະຊຸມປະຕິບັດການ, ການລົງຝຶກຫັດໃນໂຮງຮຽນ ຫຼື ການສຶກສາຕໍ່ເນື່ອງ/ການຝຶກອົບຮົມຕ່າງໆ ຢ່າງໜ້ອຍໜຶ່ງ (1) ຄັ້ງໃນໄລຍະຫ້າ (5) ປີທີ່ຜ່ານມາ. **ໄດ້ຄະແນນເຕັມ 4** ເນື່ອງຈາກທາງສະຖາບັນໄດ້ປະຕິບັດເປັນປະຈຳທຸກປີ.
- ມີການເຊື່ອມໂຍງກັບພາຍໃນຢ່າງໜ້ອຍສາມ (3) ແຫ່ງ ແລະ ກັບສາກົນໜຶ່ງ (1) ແຫ່ງ ຊຶ່ງເປັນອົງການຈັດຕັ້ງ, ສະຖາບັນການສຶກສາ ແລະ ຊຸມຊົນຕ່າງໆ ຂອງລັດຖະບານ ຫຼື ອົງການທີ່ບໍ່ຂຶ້ນກັບລັດຖະບານ ໃນໄລຍະຫ້າ (5) ປີທີ່ຜ່ານມາ. **ໄດ້ 0 ຄະແນນ.** ຍັງບໍ່ທັນປະຕິບັດໄດ້.

*ສັງລວມແລ້ວ ມາດຕະຖານດ້ານ ການຜັນຂະຫຍາຍ ແລະ ການເຊື່ອມໂຍງ ໄດ້ຄະແນນລວມເທົ່າ: 4.*

## IV. ຄຸນວຸດທິຂອງສະຖາບັນ (5%)

(ບໍ່ມີໃນມາດຖານການປະເມີນ)

## V. ຕີລາຄາລວມ

| ເງື່ອນໄຂ | ຄະແນນ |
|---|---|
| I. ຄຸນນະພາບການຮຽນ-ສອນ (50%) | |
| ກ. ການບໍລິຫານຄຸ້ມຄອງ | 2 |
| ຂ. ພາກວິຊາ/ຫ້ອງການສາຍ | 7 |
| ຄ. ຫຼັກສູດ | 5 |
| ງ. ແຫຼ່ງການຮຽນຮູ້ | 1 |
| ຈ. ຫ້ອງສະໝຸດ | 1 |
| ສ. ລະບົບການຊ່ວຍເຫຼືອນັກສຶກສາ | 1 |
| ຊ. ປະຫວັດຂອງຜູ້ຮຽນຈົບ | 2 |
| ລວມ | 19 |
| II. ການຄົ້ນຄວ້າວິໄຈ ແລະ ການພິມເຜີຍແຜ່ (30%) | |
| ລວມ | 10 |
| III. ການຜັນຂະຫຍາຍ ແລະ ການເຊື່ອມໂຍງ (20%) | |
| ລວມ | 4 |
| IV. ການຢັ້ງຢືນ/ຮັບຮອງຄຸນວຸດທິຂອງສະຖາບັນ (5%) | |
| ລວມ | 0 |
| ລວມທັງໝົດ | 33 |

ອີງໃສ່ມາດຖານແລ້ວ ເຫັນວ່າວິທະຍາໄລຄູສະຫວັນນະເຂດ ສາມາດຈັດຢູ່ໃນ *ໄລຍະເລີ່ມຕົ້ນ* ໄດ້.

ວິທະຍາໄລຄູສະຫວັນນະເຂດ

ຜູ້ອຳນວຍການ

ລັດສະໝີ ພະໄຊສີ

## ລາຍການຣູບຣິກ RUBRIC/ລາຍການກວດກາ ສຳລັບການຢັ້ງຢືນ/ຮັບຮູ້

**ໃນສະເພາະໜ້າ ແລະ ໃນໄລຍະສັ້ນ ບໍ່ແມ່ນວ່າສະຖາບັນທຸກແຫ່ງຈະມີຄຸນນະພາບໃນການຖືກຮັບຮອງດ້ານວິຊາການໄດ້, ແຕ່ເພື່ອຈຸດປະສົງໃນການຕິດຕາມປະເມີນຜົນຕໍ່ເນື່ອງ, ຈຶ່ງຂໍສະເໜີເກນການປະເມີນ ທີ່ມີລາຍລະອຽດຕົວຊີ້ບອກ ແລະ ລະດັບຕ່າງໆໃນການຮັບຮອງວິຊາການທີ່ກ່ຽວຂ້ອງ.**

| | ສູນແຫ່ງຄວາມເປັນເລີດ<br>★★★★ | ສູນແຫ່ງການພັດທະນາ<br>★★★ | **ໄລຍະເລີ່ມຕົ້ນ**<br>★★ | **ໄລຍະກະກຽມ**<br>★ |
|---|---|---|---|---|
| ຄຸນນະພາບການຮຽນ ການສອນ (45%) | **ຕົວຊີ້ບອກການປະຕິບັດງານ** | | **ຕົວຊີ້ບອກຄວາມກຽມພ້ອມ** | |
| **ກ. ການບໍລິຫານຄຸ້ມຄອງ** | ຜູ້ທີ່ເປັນຫົວໜ້າ ຫຼື ຜູ້ບໍລິຫານ ທີ່ຮັບຜິດຊອບຫຼັກສູດກໍ່ສ້າງຄູ **ຕ້ອງມີວຸດທິການສຶກສາໃນລະດັບປະລິນຍາເອກດ້ານການສຶກສາ/ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** | ຜູ້ທີ່ເປັນຫົວໜ້າ ຫຼື ຜູ້ບໍລິຫານ ທີ່ຮັບຜິດຊອບຫຼັກສູດກໍ່ສ້າງຄູ **ຕ້ອງມີວຸດທິການສຶກສາໃນລະດັບປະລິນຍາເອກດ້ານການສຶກສາ/ ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** | ຜູ້ທີ່ເປັນຫົວໜ້າ ຫຼື ຜູ້ບໍລິຫານ ທີ່ຮັບຜິດຊອບຫຼັກສູດກໍ່ສ້າງຄູ **ຕ້ອງມີວຸດທິການສຶກສາໃນລະດັບປະລິນຍາໂທດ້ານການສຶກສາ/ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** | ຜູ້ທີ່ເປັນຫົວໜ້າ ຫຼື ຜູ້ບໍລິຫານ ທີ່ຮັບຜິດຊອບຫຼັກສູດກໍ່ສ້າງຄູ **ຕ້ອງມີວຸດທິການສຶກສາໃນລະດັບ ປະລິນຍາໂທດ້ານການສຶກສາ/ ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** |
| **ຄະແນນ** | **3 ຄະແນນ** | **3 ຄະແນນ** | **2 ຄະແນນ** | **2 ຄະແນນ** |
| | | | | |
| **ຂ. ພາກວິຊາ/ຫ້ອງການສາຍ** | ຕ້ອງມີພະນັກງານວິຊາການປະຈຳການເຕັມເວລາຢ່າງໜ້ອຍຫ້າ (5) ຄົນ ຊຶ່ງທຸກຄົນຕ້ອງມີວຸດທິການສຶກສາໃນລະດັບປະລິນຍາເອກດ້ານການສຶກສາ/ **ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** | ຕ້ອງມີພະນັກງານວິຊາການປະຈຳການເຕັມເວລາ ຢ່າງໜ້ອຍ ສາມ (3) ຄົນ ຊຶ່ງທຸກຄົນຕ້ອງມີວຸດທິການສຶກສາໃນລະດັບປະລິນຍາເອກດ້ານ | ຕ້ອງມີພະນັກງານວິຊາການປະຈຳການເຕັມເວລາ ຢ່າງໜ້ອຍ ສອງ (2) ຄົນ ຊຶ່ງທຸກຄົນຕ້ອງມີວຸດທິການສຶກສາໃນລະດັບປະລິນຍາໂທດ້ານການສຶກສາ/ **ການບໍລິຫານ** | ຕ້ອງມີພະນັກງານວິຊາການປະຈຳການເຕັມເວລາ ຢ່າງໜ້ອຍ ໜຶ່ງ (1) ຄົນ ຊຶ່ງຕ້ອງມີວຸດທິການສຶກສາໃນລະດັບປະລິນຍາໂທ ດ້ານການສຶກສາ/ **ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາ** |

| | | | | |
|---|---|---|---|---|
| | | ການສຶກສາ/ **ການບໍລິຫານຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** | **ຄຸ້ມຄອງການສຶກສາ/ ຫຼື ວິຊາສະເພາະໃດໜຶ່ງ.** | **ສະເພາະໃດໜຶ່ງ.** |
| | **4 ຄະແນນ** | **3 ຄະແນນ** | **2 ຄະແນນ** | **1 ຄະແນນ** |
| | ຄູສອນທຸກຄົນ (100%) ສອນຕາມສາຍວິຊາສະເພາະທີ່ຮຽນຈົບມາ ຫຼື ໄດ້ມີເອກະສານບັນທຶກການຄົ້ນຄວ້າວິໄຈ, ການພິມເຜີຍແຜ່ ແລະ ມີປະສົບການດ້ານວິຊາການອື່ນໆທີ່ກ່ຽວຂ້ອງ. | ຄູສອນ ຢ່າງໜ້ອຍ 80% ສອນຕາມສາຍວິຊາສະເພາະທີ່ຮຽນຈົບມາ ຫຼື ໄດ້ມີເອກະສານບັນທຶກການຄົ້ນຄວ້າວິໄຈ, ການພິມເຜີຍແຜ່ ແລະ ມີປະສົບການດ້ານວິຊາການອື່ນໆທີ່ກ່ຽວຂ້ອງ. | ຢ່າງໜ້ອຍ 50% ຂອງຈຳນວນຄູສອນທັງໝົດ ໄດ້ສອນຕາມສາຍວິຊາສະເພາະທີ່ຮຽນຈົບມາ. | ໜ້ອຍກວ່າ 50% ຂອງຈຳນວນຄູສອນທັງໝົດ ໄດ້ສອນຕາມສາຍວິຊາສະເພາະທີ່ຮຽນຈົບມາ. |
| | **4 ຄະແນນ** | **3 ຄະແນນ** | **2 ຄະແນນ** | **1 ຄະແນນ** |
| | ຄູສອນທຸກຄົນທີ່ສອນໃນລະດັບອະນຸປະລິນຍາມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາໂທ ແລະ ຄູສອນທຸກຄົນທີ່ສອນໃນລະດັບປະລິນຍາຕີ ມີວຸດທິການສຶກສາໃນລະດັບປະລິນຍາເອກ. | ຄູສອນທຸກຄົນທີ່ສອນໃນລະດັບອະນຸປະລິນຍາມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາໂທ ແລະ ຄູສອນທຸກຄົນທີ່ສອນໃນລະດັບປະລິນຍາຕີ ມີວຸດທິການສຶກສາໃນລະດັບປະລິນຍາເອກ. | ຄູສອນທຸກຄົນທີ່ສອນໃນລະດັບອະນຸປະລິນຍາມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາຕີ ແລະ ຄູສອນທຸກຄົນທີ່ສອນໃນລະດັບປະລິນຍາຕີ ມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາໂທ. | ຄູສອນທຸກຄົນທີ່ສອນໃນລະດັບອະນຸປະລິນຍາມີວຸດທິການສຶກສາຢ່າງໜ້ອຍໃນລະດັບປະລິນຍາຕີ, ບໍ່ມີການສອນໃນລະດັບປະລິນຍາຕີ. |
| | **2 ຄະແນນ** | **2 ຄະແນນ** | **0.5 ຄະແນນ** | **0.5 ຄະແນນ** |
| | ມີລະບົບການປະເມີນຜົນການຮຽນ-ການສອນ ເປັນແຕ່ລະໄລຍະ ໂດຍຜູ້ບໍລິຫານ, | ມີລະບົບການປະເມີນຜົນການຮຽນ-ການສອນ ເປັນແຕ່ລະ | ມີລະບົບການປະເມີນຜົນການຮຽນ-ການສອນ ເປັນແຕ່ລະ | **ຍັງບໍ່ທັນມີ**ລະບົບການປະເມີນຜົນການຮຽນ-ການສອນ ເປັນແຕ່ລະໄລຍະ |

| | | | | |
|---|---|---|---|---|
| | ເພື່ອນຮ່ວມງານ ແລະ ນັກສຶກສາ ແລະ **ມີການດຳເນີນການປະເມີນຢ່າງມີປະສິດທິພາບ** ແນໃສ່ປັບປຸງການຮຽນ/ການສອນໃຫ້ດີຂຶ້ນ. | ໄລຍະ ໂດຍຜູ້ບໍລິຫານ, ເພື່ອນຮ່ວມງານ ແລະ ນັກສຶກສາ ແລະ **ມີການດຳເນີນການປະເມີນຢ່າງມີປະສິດທິພາບ** ແນໃສ່ປັບປຸງການຮຽນ/ການສອນໃຫ້ດີຂຶ້ນ. | ໄລຍະ ໂດຍຜູ້ບໍລິຫານ, ເພື່ອນຮ່ວມງານ ແລະ ນັກສຶກສາ ແລະ **ມີການດຳເນີນການປະເມີນ** ແນໃສ່ປັບປຸງການຮຽນ/ການສອນໃຫ້ດີຂຶ້ນ **ແຕ່ບໍ່ມີປະສິດທິພາບ ປານໃດ**. | ໂດຍຜູ້ບໍລິຫານ, ເພື່ອນຮ່ວມງານ ແລະ ນັກສຶກສາ ແນໃສ່ປັບປຸງການຮຽນ/ການສອນໃຫ້ດີຂຶ້ນ. |
| | **2 ຄະແນນ** | **2 ຄະແນນ** | **1 ຄະແນນ** | **0.5 ຄະແນນ** |
| | **ອີງໃສ່ຕົວຊີ້ບອກການປະຕິບັດໜ້າທີ່ຂອງຄູ, ໄດ້ປັບປຸງຕົວຊີ້ບອກດັ່ງກ່າວໂດຍລວມເອົາຕົວຊີ້ບອກດ້ານຄວາມຮູ້ວິຊາຊີບຄູ** | | | |
| | ພະນັກງານປະຈຳການເຕັມເວລາທຸກຄົນຕ້ອງໄດ້ເຂົ້າຮ່ວມກອງປະຊຸມລວມໃນລະດັບຊາດ ແລະ ໃນລະດັບສາກົນ (ເຊັ່ນຕາມໂມດູນຂອງ SEAMEO) ໃນນາມຜູ້ສະເໜີເອກະສານໃນກອງປະຊຸມດັ່ງກ່າວໃນໄລຍະຫ້າ (5) ປີຜ່ານມາ. | ຢ່າງໜ້ອຍ 50% ຂອງຈຳນວນພະນັກງານປະຈຳການເຕັມເວລາໄດ້ເຂົ້າຮ່ວມກອງປະຊຸມລວມໃນລະດັບຊາດ ແລະ ໃນລະດັບສາກົນ (ເຊັ່ນໂມດູນຂອງ SEAMEO) ໃນນາມຜູ້ສະເໜີເອກະສານໃນກອງປະຊຸມດັ່ງກ່າວ ໃນໄລຍະຫ້າ (5) ປີຜ່ານມາ. | ໜ້ອຍກວ່າ 50% ຂອງຈຳນວນພະນັກງານປະຈຳການເຕັມເວລາໄດ້ເຂົ້າຮ່ວມກອງປະຊຸມລວມໃນລະດັບຊາດ ແລະ ໃນລະດັບສາກົນ (ເຊັ່ນໂມດູນຂອງ SEAMEO) ໃນນາມຜູ້ສະເໜີເອກະສານໃນກອງປະຊຸມດັ່ງກ່າວ ໃນໄລຍະ ຫ້າ (5) ປີຜ່ານມາ. | |
| | **4 ຄະແນນ** | **3 ຄະແນນ** | **1.5 ຄະແນນ** | |
| | ຢ່າງໜ້ອຍ 50% ຂອງຈຳນວນ ພະນັກງານປະຈຳການເຕັມເວລາ ໄດ້ຮັບການຍ້ອງຍໍ, ທຶນການສຶກສາ ແລະ ຮູບການນະໂຍບາຍອື່ນໆ ດ້ານການຮັບຮອງວິທະຍາຖານະຈາກອົງການຈັດຕັ້ງທີ່ເປັນມືອາຊີບ ແລະ ມີຊື່ສຽງໃນລະດັບຊາດ ແລະ ໃນລະດັບສາກົນ | ຢ່າງໜ້ອຍ 30% ຂອງຈຳນວນ ພະນັກງານປະຈຳການເຕັມເວລາ ໄດ້ຮັບການຍ້ອງຍໍ, ທຶນການສຶກສາ ແລະ ຮູບການນະໂຍບາຍອື່ນໆ ດ້ານການຮັບຮອງວິທະຍາຖານະຈາກ | ໜ້ອຍກວ່າ 30% ຂອງຈຳນວນພະນັກງານປະຈຳການເຕັມເວລາໄດ້ຮັບການຍ້ອງຍໍ, ທຶນການສຶກສາ ແລະ ຮູບການນະໂຍບາຍອື່ນໆ ດ້ານການຮັບຮອງວິທະຍາຖານະຈາກອົງການຈັດຕັ້ງທີ່ເປັນມື | |

| | | | | |
|---|---|---|---|---|
| | ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ອົງການຈັດຕັ້ງທີ່ເປັນມືອາຊີບ ແລະ ມີຊື່ສຽງໃນລະດັບຊາດ ແລະ ໃນລະດັບສາກົນ ໃນ ໄລຍະຫ້າ (5) ປີທີ່ຜ່ານມາ. | ອາຊີບ ແລະ ມີຊື່ສຽງໃນລະດັບ ຊາດ ແລະ ໃນລະດັບສາກົນ ໃນ ໄລຍະຫ້າ (5) ປີທີ່ຜ່ານມາ. | |
| | **4 ຄະແນນ** | **3 ຄະແນນ** | **1.5 ຄະແນນ** | |
| | ຢ່າງໜ້ອຍ (25%) ຂອງຈຳນວນ ພະນັກງານປະຈຳການເຕັມເວລາ ຕ້ອງເປັນ ພະນັກງານຊີ້ນຳຂອງອົງການວິຊາການໃນ ລະດັບຊາດ ແລະ ໃນລະດັບສາກົນ ດ້ານ ການສຶກສາ/ສາຍວິຊາ ຫຼືໃນວິຊາສະເພາະ ທີ່ມີການພົວພັນກັບວິຊາສອນ. | ຢ່າງໜ້ອຍ 20% ຂອງຈຳ ນວນ ພະນັກງານປະຈຳການ ເຕັມເວລາ ຕ້ອງເປັນ ພະນັກງານຊີ້ນຳຂອງອົງການ ວິຊາການໃນລະດັບຊາດ ແລະ ໃນລະດັບສາກົນ ດ້ານການ ສຶກສາ/ສາຍວິຊາ ຫຼື ໃນວິຊາ ສະເພາະ ທີ່ມີການພົວພັນກັບ ວິຊາສອນ. | ຢ່າງໜ້ອຍ 5% ຂອງຈຳນວນ ພະນັກງານປະຈຳການເຕັມເວລາ ຕ້ອງເປັນພະນັກງານຊີ້ນຳຂອງ ອົງການວິຊາການໃນລະດັບຊາດ ດ້ານການສຶກສາ/ສາຍວິຊາ ຫຼື ໃນ ວິຊາສະເພາະ ທີ່ມີການພົວພັນກັບ ວິຊາສອນ. | |
| | **3 ຄະແນນ** | **2 ຄະແນນ** | **0 ຄະແນນ** | |
| | | | | |
| **ຄ. ຫຼັກສູດ** | ມີຫຼັກສູດສ້າງຄູໃນລະດັບອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ ແລະ ປະລິນຍາ ເອກດ້ານການສຶກສາ/ ສາຍວິຊາສະເພາະ ເປັນໄລຍະເວລາຢ່າງໜ້ອຍສິບ (10) ປີ. | ມີຫຼັກສູດສ້າງຄູໃນລະດັບ ອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ ດ້ານການສຶກ ສາ/ ສາຍວິຊາສະເພາະ ເປັນ ໄລຍະເວລາຢ່າງໜ້ອຍຫ້າ (5) ປີ. | ມີຫຼັກສູດສ້າງຄູໃນລະດັບອະນຸ ປະລິນຍາ ລວມທັງຫຼັກສູດສ້າງຄູ ມັດທະຍົມສຶກສາ ໃນຫ້າ (5) ສາຍວິຊາ. | ມີຫຼັກສູດສ້າງຄູໃນລະດັບອະນຸ ປະລິນຍາ ລວມທັງຫຼັກສູດສ້າງຄູ ມັດທະຍົມສຶກສາ ໃນ ສອງ (2) ສາຍ ວິຊາ. |
| | **5 ຄະແນນ** | **4 ຄະແນນ** | **3 ຄະແນນ** | **2 ຄະແນນ** |

| | | | | |
|---|---|---|---|---|
| | ມີຫຼັກສູດສ້າງຄູໃນລະດັບຫຼັງປະລິນຍາຕີ ໃນສາມປະເພດ (3) ຄື: ສ້າງຄູສອນຊັ້ນ ອະນຸບານ, ຊັ້ນປະຖົມສຶກສາ ແລະ ຊັ້ນ ມັດທະຍົມສຶກສາ (ມີ 10 ໃນຈຳນວນ 15 ສາຍວິຊາຂອງຫຼັກສູດສ້າງຄູມັດທະຍົມສຶກ ສາ). | ມີຫຼັກສູດສ້າງຄູໃນລະດັບຫຼັງ ປະລິນຍາຕີ ໃນສາມປະເພດ (3) ຄື: ສ້າງຄູສອນຊັ້ນ ອະນຸບານ, ຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ (ມີ 7 ໃນຈຳນວນ 15 ສາຍ ວິຊາຂອງຫຼັກສູດ ສ້າງຄູ ມັດທະຍົມສຶກສາ). | ມີຫຼັກສູດສ້າງຄູໃນລະດັບປະລິນຍາ ຕີ ໃນສາມ ປະເພດ (3) ປະເພດຄື: ສ້າງຄູ ສອນຊັ້ນ ອະນຸບານ, ຊັ້ນປະຖົມ ສຶກສາ ແລະ ຊັ້ນມັດທະຍົມສຶກສາ (ມີ 5 ໃນຈຳນວນ 15 ສາຍວິຊາ ຂອງຫຼັກສູດສ້າງຄູມັດທະຍົມສຶກ ສາ). | ມີຫຼັກສູດສ້າງຄູໃນລະດັບປະລິນຍາຕີ ໃນສາມປະເພດ (3) ປະເພດຄື: ສ້າງຄູ ສອນຊັ້ນ ອະນຸບານ, ຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ (ມີ 2 ໃນ ຈຳນວນ 15 ສາຍວິຊາຂອງຫຼັກສູດສ້າງ ຄູມັດທະຍົມສຶກສາ). |
| | **5 ຄະແນນ** | **4 ຄະແນນ** | **3 ຄະແນນ** | **2 ຄະແນນ** |
| **ງ. ແຫຼ່ງການຮຽນຮູ້** ***(ຄວາມສາມາດດ້ານເຕັກໂນ ໂລຊີການສື່ສານ, ສິ່ງອຳນວຍ ຄວາມສະດວກ, ແລະ ເຄື່ອງ ອຸປະກອນ)*** | ນັກສຶກສາ ແລະ ຄູອາຈານ ສາມາດເຂົ້າເຖິງ ຫ້ອງ/ສິ່ງອຳນວຍຄວາມສະດວກດ້ານຄອມ ພິວເຕີຢ່າງເຕັມສ່ວນ ໂດຍນຳໃຊ້ໂປຣ ແກຣມທີ່ມີໃບອະນຸຍາດ ຫຼື ໂປຣແກຣມ ເປີດກວ້າງ. ມີເນື້ອໃນບົດຮຽນເອເລັກ ໂທຣນິກຢ່າງໜ້ອຍ 1,500 ຫົວ/ຫົວເລື່ອງ ສຳລັບ 7 ສາຍວິຊາທີ່ສອນ. ເນື້ອໃນທັງໝົດ ຖືກເກັບມ້ຽນໃນເວບໄຊບົດຮຽນເອເລັກ ໂທຣນິກ | ນັກສຶກສາ ແລະ ຄູອາຈານ ສາມາດເຂົ້າເຖິງຫ້ອງ/ ສິ່ງອຳ ນວຍຄວາມສະດວກດ້ານ ຄອມພິວເຕີ ຢ່າງເຕັມສ່ວນ ໂດຍນຳໃຊ້ໂປຣແກຣມທີ່ມີໃບ ອະນຸຍາດ ຫຼື ໂປຣແກຣມ ເປີດກວ້າງ. ມີເນື້ອໃນ ບົດຮຽນເອເລັກໂທຣນິກຢ່າງ ໜ້ອຍ 1,000 ຫົວ/ຫົວເລື່ອງ ສຳລັບ 7 ສາຍວິຊາທີ່ສອນ. ເນື້ອໃນທັງໝົດຖືກເກັບມ້ຽນ ໃນເວບໄຊບົດຮຽນເອເລັກ ໂທຣນິກ | ນັກສຶກສາ ແລະ ຄູອາຈານ ສາ ມາດເຂົ້າເຖິງຫ້ອງ/ ສິ່ງອຳນວຍ ຄວາມສະດວກດ້ານຄອມພິວເຕີ ຢ່າງເຕັມສ່ວນ ໂດຍນຳໃຊ້ໂປຣ ແກຣມທີ່ມີໃບອະນຸຍາດ ຫຼື ໂປຣ ແກຣມເປີດກວ້າງ. ມີເນື້ອໃນ ບົດຮຽນເອເລັກໂທຣນິກຢ່າງ ໜ້ອຍ 500 ຫົວ/ຫົວເລື່ອງ ສຳລັບ 5 ສາຍວິຊາທີ່ສອນ. ເນື້ອ ໃນທັງໝົດຖືກເກັບມ້ຽນໃນເວບ ໄຊບົດຮຽນເອເລັກໂທຣນິກ | ນັກສຶກສາ ແລະ ຄູອາຈານ**ບໍ່ ສາມາດ** ເຂົ້າເຖິງຫ້ອງ/ ສິ່ງອຳນວຍຄວາມ ສະດວກດ້ານ ຄອມພິວເຕີ ໂດຍນຳໃຊ້ ໂປຣແກຣມທີ່ມີໃບອະນຸຍາດ ຫຼື ໂປຣ ແກຣມເປີດກວ້າງ. ບໍ່ມີເນື້ອໃນບົດຮຽນ |
| | **4 ຄະແນນ** | **3 ຄະແນນ** | **2 ຄະແນນ** | **0 ຄະແນນ** |
| *ໝາຍເຫດ: ກຳນົດຄອມພິວເຕີຕັ້ງໂຕະໜຶ່ງໜ່ວຍຕໍ່ນັກຮຽນ/ຄູອາຈານ __ຄົນ (ເຂົ້າເຖິງຢ່າງເຕັມສ່ວນ ຫຼື ເປັນບາງຄັ້ງ); ກຳນົດງົບປະມານຄ່າໃຊ້ຈ່າຍອິນເຕີເນັດ* | | | | |

| | | | | |
|---|---|---|---|---|
| **ຈ. ຫ້ອງສະໝຸດ** *(ສຳລັບຫຼັກສູດສ້າງຄູສອນຊັ້ນມັດທະຍົມສຶກສາ, ຂໍແນະນຳໃຫ້ມີເອກະສານທີ່ບໍ່ເກົ່າຫຼາຍຄືໃຫ້ມີເອກະສານພິມຫຼັງປີ 2000)* | ມີການປັບປຸງຫ້ອງສະໝຸດໃຫ້ທັນສະໄໝ ( ເອກະສານສຳພັດ/ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ຊຶ່ງເປັນແຫຼ່ງເອກະສານອ້າງອີງຈາກສາກົນ ແລະ ໜັງສືພິມທ້ອງຖິ່ນຮັບໃຊ້ສາຍວິຊາຕ່າງໆທີ່ທາງສະຖາບັນມີການສອນ.<br><br>ຫ້ອງສະໝຸດມີປຶ້ມຢ່າງໜ້ອຍ **1,500** ຫົວ/ຫົວເລື່ອງ (ເອກະສານສຳພັດ/ ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ສຳລັບ 7 ສາຍວິຊາທີ່ສອນ. | ມີການປັບປຸງຫ້ອງສະໝຸດໃຫ້ທັນສະໄໝ (ເອກະສານສຳພັດ/ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ຊຶ່ງເປັນແຫຼ່ງເອກະສານອ້າງອີງຈາກສາກົນ ແລະ ໜັງສືພິມທ້ອງຖິ່ນ ຮັບໃຊ້ສາຍວິຊາຕ່າງໆທີ່ທາງສະຖາບັນມີການສອນ.<br><br>ຫ້ອງສະໝຸດມີປຶ້ມຢ່າງໜ້ອຍ **1,000** ຫົວ/ຫົວເລື່ອງ (ເອກະສານສຳພັດ/ ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ສຳລັບ 7 ສາຍວິຊາທີ່ສອນ. | ມີການປັບປຸງຫ້ອງສະໝຸດໃຫ້ທັນສະໄໝ (ເອກະສານສຳພັດ/ ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ເພື່ອເປັນບ່ອນອີງຈາກສາກົນ ແລະ ຈາກທ້ອງຖິ່ນ.<br><br>ຫ້ອງສະໝຸດມີປຶ້ມຢ່າງໜ້ອຍ **500** ຫົວ/ຫົວເລື່ອງ (ເອກະ ສານສຳພັດ/ ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ສຳລັບ 5 ສາຍວິຊາທີ່ສອນ. | ມີການປັບປຸງຫ້ອງສະໝຸດໃຫ້ທັນສະໄໝ (ເອກະສານສຳພັດ/ ຜ່ານ ຄອມພິວເຕີ ຫຼື ເປັນສິ່ງພິມ) ເພື່ອເປັນບ່ອນອີງຈາກສາກົນ ແລະ ຈາກທ້ອງຖິ່ນ.<br><br>ຫ້ອງສະໝຸດມີປຶ້ມຢ່າງໜ້ອຍ **200** ຫົວ/ ຫົວເລື່ອງ (ເອກະສານສຳພັດ/ ຜ່ານຄອມພິວເຕີ ຫຼື ເປັນສິ່ງພິມ) ສຳລັບ 2 ສາຍວິຊາ. |
| | **4 ຄະແນນ** | **2 ຄະແນນ** | **1 ຄະແນນ** | **0.5 ຄະແນນ** |
| **ສ. ລະບົບການຊ່ວຍເຫຼືອນັກສຶກສາ** | ໃນໜ່ວຍງານ (ມະຫາວິທະຍາໄລ /ສະຖາບັນສ້າງຄູ/ວິທະຍາໄລຄູ) ຕ້ອງມີແຜນການແນະນຳນັກສຶກສາ ແລະ ມີປຶ້ມຄູ່ມືນັກສຶກສາທີ່ເວົ້າເຖິງກົດລະບຽບ ແລະ ການບໍລິການ, ຕ້ອງມີການໃຫ້ຄຳປຶກສາ ແລະ ການບໍລິການນັກສຶກສາ ສຳລັບນັກສຶກສາທີ່ເຂົ້າໃໝ່. | ໃນໜ່ວຍງານ (ມະຫາວິທະຍາໄລ /ສະຖາບັນສ້າງຄູ/ວິທະຍາໄລຄູ) ຕ້ອງມີແຜນການແນະນຳນັກສຶກສາ ແລະ ມີປຶ້ມຄູ່ມືນັກສຶກສາທີ່ເວົ້າເຖິງກົດລະບຽບ ແລະ ການບໍລິການ, ຕ້ອງມີການໃຫ້ຄຳປຶກສາ ແລະ ການບໍລິການນັກ | ໃນໜ່ວຍງານ (ມະຫາວິທະຍາໄລ /ສະຖາບັນສ້າງຄູ/ວິທະຍາໄລຄູ) ມີແຜນປະຕິບັດງານ | ໃນໜ່ວຍງານ (ມະຫາວິທະຍາໄລ /ສະຖາບັນສ້າງຄູ/ວິທະຍາໄລຄູ) ບໍ່ມີແຜນປະຕິບັດງານ |

| | | | | |
|---|---|---|---|---|
| | | ສຶກສາ ສຳລັບນັກສຶກສາທີ່ເຂົ້າໃໝ່. | | |
| | **2 ຄະແນນ** | **2 ຄະແນນ** | **1 ຄະແນນ** | **0 ຄະແນນ** |
| | **ມີປື້ມບັນທຶກນັກສຶກສາທີ່ຮຽນຈົບ?** | | | |
| **ຊ. ປະຫວັດຂອງຜູ້ຮຽນຈົບ** | ມີຢ່າງໜ້ອຍໜຶ່ງ (1) ຄົນ ທີ່ຮຽນຈົບຂັ້ນປະລິນຍາເອກ ແລະ ຢ່າງໜ້ອຍຫົກ (6) ຄົນຮຽນຈົບຂັ້ນປະລິນຍາໂທ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ມີຢ່າງໜ້ອຍສາມ (3) ຄົນ ຮຽນຈົບຂັ້ນປະລິນຍາໂທ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ມີຢ່າງໜ້ອຍ 120 ຄົນຮຽນຈົບຂັ້ນປະລິນຍາຕີ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ມີຢ່າງໜ້ອຍ 90 ຄົນຮຽນຈົບຂັ້ນປະລິນຍາຕີ ໃນໄລຍະຫ້າ (5) ປີທີ່ຜ່ານມາ. |
| | **4 ຄະແນນ** | **3 ຄະແນນ** | **2 ຄະແນນ** | **1 ຄະແນນ** |
| | | | | |
| **II. ການຄົ້ນຄວ້າວິໄຈ ແລະ ການພິມເຜີຍແຜ່ (30%)** | ພະນັກງານປະຈຳການເຕັມເວລາ / ຄູອາຈານປະຈຳສາຍວິຊາທຸກຄົນໄດ້ເຮັດການຄົ້ນຄວ້າວິໄຈ (ຄົ້ນຄວ້າ ພື້ນຖານ ຫຼື ຄົ້ນຄວ້ານຳໃຊ້) ໃນໄລຍະຫ້າ (5) ປີທີ່ຜ່ານມາ.<br><br>ໜ່ວຍງານຕ້ອງມີຢ່າງໜ້ອຍ**ສອງ (2) ແຜນງານ/ໂຄງການຄົ້ນຄວ້າວິໄຈ** ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ມີຢ່າງໜ້ອຍ 50% ຂອງຈຳນວນພະນັກງານປະຈຳການເຕັມເວລາ/ ຄູອາຈານປະຈຳສາຍວິຊາໄດ້ເຮັດການຄົ້ນຄວ້າວິໄຈ (ຄົ້ນຄວ້າພື້ນຖານ ຫຼື ຄົ້ນຄວ້ານຳໃຊ້) ໃນໄລຍະຫ້າ (5) ປີທີ່ຜ່ານມາ.<br>ໜ່ວຍງານຕ້ອງມີຢ່າງໜ້ອຍ **ໜຶ່ງ (1) ແຜນງານ/ໂຄງການຄົ້ນຄວ້າວິໄຈ** ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ໜ້ອຍກວ່າ 50% ຂອງຈຳນວນພະນັກງານປະຈຳການເຕັມເວລາ/ ຄູອາຈານປະຈຳສາຍວິຊາໄດ້ເຮັດການຄົ້ນຄວ້າວິໄຈ (ຄົ້ນຄວ້າພື້ນຖານ ຫຼື ຄົ້ນຄວ້ານຳໃຊ້) ໃນໄລຍະຫ້າ (5) ປີທີ່ຜ່ານມາ. | |
| | **25 ຄະແນນ** | **20 ຄະແນນ** | **10 ຄະແນນ** | **0 ຄະແນນ** |
| | | | | |

| | | | | |
|---|---|---|---|---|
| **III. ການຜັນຂະຫຍາຍ ແລະ ການເຊື່ອມໂຍງ** | ໜ່ວຍງານຕ້ອງໄດ້ຈັດກອງປະຊຸມສຳມະນາ, ກອງປະຊຸມປະຕິບັດການ, ການລົງຝຶກຫັດໃນໂຮງຮຽນ ຫຼື ການສຶກສາຕໍ່ເນື່ອງ/ການຝຶກອົບຮົມຕ່າງໆ ຢ່າງໜ້ອຍຫ້າ (5) ຄັ້ງ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ໜ່ວຍງານຕ້ອງໄດ້ຈັດກອງປະຊຸມການສຳມະນາ, ກອງປະຊຸມປະຕິບັດການ, ການລົງຝຶກຫັດໃນໂຮງຮຽນ ຫຼື ການສຶກສາຕໍ່ເນື່ອງ/ ການຝຶກອົບຮົມຕ່າງໆ ຢ່າງໜ້ອຍສາມ (3) ຄັ້ງ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ໜ່ວຍງານຕ້ອງໄດ້ຈັດກອງປະຊຸມການສຳມະນາ, ກອງປະຊຸມປະຕິບັດການ, ການລົງຝຶກຫັດໃນໂຮງຮຽນ ຫຼື ການສຶກສາຕໍ່ເນື່ອງ/ການຝຶກອົບຮົມຕ່າງໆ ຢ່າງໜ້ອຍໜຶ່ງ (1) ຄັ້ງ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | |
| | **15 ຄະແນນ** | **10 ຄະແນນ** | **4 ຄະແນນ** | **0 ຄະແນນ** |
| | ມີການເຊື່ອມໂຍງກັບພາຍໃນຢ່າງໜ້ອຍສິບ (10) ແຫ່ງ ແລະ ກັບສາກົນ ຫ້າ (5) ແຫ່ງ ຊຶ່ງເປັນອົງການຈັດຕັ້ງ, ສະຖາບັນການສຶກສາ ແລະ ຊຸມຊົນຕ່າງໆ ຂອງລັດຖະບານ ຫຼື ອົງການທີ່ບໍ່ຂຶ້ນກັບລັດຖະບານ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ມີການເຊື່ອມໂຍງກັບພາຍໃນຢ່າງໜ້ອຍຫ້າ (5) ແຫ່ງ ແລະ ກັບສາກົນສາມ (3) ແຫ່ງ ຊຶ່ງເປັນອົງການຈັດຕັ້ງ, ສະຖາບັນການສຶກສາ ແລະ ຊຸມຊົນຕ່າງໆ ຂອງລັດຖະບານ ຫຼື ອົງການທີ່ບໍ່ຂຶ້ນກັບລັດຖະບານ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | ມີການເຊື່ອມໂຍງກັບພາຍໃນຢ່າງໜ້ອຍສາມ (3) ແຫ່ງ ແລະ ກັບສາກົນໜຶ່ງ (1) ແຫ່ງ ຊຶ່ງເປັນອົງການຈັດຕັ້ງ, ສະຖາບັນການສຶກສາ ແລະ ຊຸມຊົນຕ່າງໆ ຂອງລັດຖະບານ ຫຼື ອົງການທີ່ບໍ່ຂຶ້ນກັບລັດຖະບານ ໃນໄລຍະຫ້າ (5) ປີທີ່ຜ່ານມາ. | |
| | **5 ຄະແນນ** | **4 ຄະແນນ** | **3 ຄະແນນ** | **0 ຄະແນນ** |

| | | | | |
|---|---|---|---|---|
| **IV. ຄຸນວຸດທິຂອງສະຖາບັນ (5%)** | ໜ່ວຍງານໄດ້ຖືກຍອມຮັບຈາກອົງການຈັດຕັ້ງພາຍນອກ (ເຊັ່ນມີໃບຮັບຮອງ/ໃບຢັ້ງຢືນວິທະຍາຖານະຈາກສາກົນ ແລະ ຈາກລະດັບຊາດ ຮັບຮູ້ໃນຖານະເປັນສູນແຫ່ງຄວາມເປັນເລີດ/ສູນແຫ່ງການພັດທະນາ) ສຳລັບພາກ ວິຊາໃດໜຶ່ງໃນຫຼັກສູດສ້າງຄູສອນຊັ້ນມັດທະຍົມສຶກສາ. | ໜ່ວຍງານໄດ້ຖືກຍອມຮັບຈາກອົງການຈັດຕັ້ງພາຍນອກ (ເຊັ່ນມີໃບຮັບຮອງ/ ໃບຢັ້ງຢືນ ວິທະຍາຖານະຈາກສາກົນ ຫຼື ຈາກລະດັບຊາດຮັບຮູ້ໃນຖານະເປັນສູນແຫ່ງຄວາມເປັນເລີດ/ ສູນແຫ່ງການພັດທະນາ) ສຳລັບພາກວິຊາໃດໜຶ່ງໃນຫຼັກສູດສ້າງຄູສອນຊັ້ນມັດທະຍົມສຶກສາ. | | |
| | **5 ຄະແນນ** | **5 ຄະແນນ** | **0 ຄະແນນ** | **0 ຄະແນນ** |
| | **ກົມສ້າງຄູຈັດຕັ້ງຄະນະກຳມະການ Task Force ເພື່ອຮັບຮອງວິທະຍາຖານະ** | | | |
| | | | | |
| | **ໝາຍເຫດ**: ຜູ້ສະໝັກຈະຕ້ອງໄດ້ຄະແນນຕາມເງື່ອນໄຂຢ່າງໜ້ອຍ 95 ຄະແນນ ຈຶ່ງຈະຖືກຄັດເລືອກເປັນສູນແຫ່ງຄວາມເປັນເລີດ. | **ໝາຍເຫດ**: ຜູ້ສະເໜີຈະຕ້ອງໄດ້ຄະແນນ ຕາມເງື່ອນໄຂໃນລະຫວ່າງ 42-80 ຄະແນນ ຈຶ່ງຈະຖືກຄັດເລືອກເປັນສູນແຫ່ງການ ພັດທະນາ. | **ໝາຍເຫດ**: ຜູ້ສະເໜີຈະຕ້ອງໄດ້ຄະແນນ ຕາມເງື່ອນໄຂໃນລະຫວ່າງ 11-41.5 ຄະແນນ ຈຶ່ງຈະຖືກຄັດເລືອກໃນໄລຍະເລີ້ມຕົ້ນ. | **ໝາຍເຫດ**: ຜູ້ສະເໜີຈະຕ້ອງໄດ້ຄະແນນ ຕາມເງື່ອນໄຂລະຫວ່າງ 5-10.5 ຄະແນນ ຈຶ່ງຈະຖືກຄັດເລືອກຢູ່ໃນໄລຍະກະກຽມ. |